# ບົດຂ່າວ

Empowered lives.
Resilient nations.

**ອົງການສະຫະປະຊາຊາດ ເພື່ອການພັດທະນາ ຕອກຢ້ຳການສະໜັບສະໜູນ ສປປ ລາວ ກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກໄພນ້ຳຖ້ວມ**

ນະຄອນຫຼວງວຽງຈັນ, 27 ກໍລະກົດ 2018

ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ສະເໜີໃຫ້ການສະໜັບສະໜູນ ລັດຖະບານແຫ່ງ ສປປ ລາວ ເພື່ອຊ່ວຍໃນການປະສານງານສຳລັບການກູ້ໄພ ແລະ ການບັນເທົາທຸກ ຢູ່ແຂວງອັດຕະປື ທີ່ຖືກນ້ຳຖ້ວມ ເນື່ອງຈາກຄວາມເສຍຫາຍຈາກເຂື່ອນໄຟຟ້າພະລັງງານນ້ຳ ທີ່ຢູ່ພາກໃຕ້ຂອງລາວ.

ໃນຈົດໝາຍຂອງທ່ານ ອາຄິມ ສະຕາຍເນີ, ຜູ້ບໍລິຫານອົງການສະຫະປະຊາຊາດ ເພື່ອການພັດທະນາ ທີ່ສົ່ງຫາ ພະນະທ່ານ ທອງລຸນ ສີສຸລິດ, ລັດຖະມົນຕີແຫ່ງ ສປປ ລາວ, ມີເນື້ອໃນຕອນໜຶ່ງທ່ານໄດ້ກ່າວວ່າ "ຂ້າພະເຈົ້າຂໍສະແດງຄວາມເປັນນ້ຳໜຶ່ງໃຈດຽວກັບທາງລັດຖະບານ ແລະ ປະຊາ ຊົນ ແຫ່ງ ສປປ ລາວ ໃນຊ່ວງເວລາທີ່ ຫຍຸ້ງຍາກນີ້ ແລະ ພວກເຮົາກໍຂໍສະແດງຄວາມເສຍໃຈ ໄປຍັງຄອບຄົວ ທີ່ໄດ້ຮັບຜົນກະທົບ ທີ່ໄດ້ສູນເສຍຄົນຮັກຂອງພວກເຂົາໄປ".

ມື້ນີ້, ຈົດໝາຍແຈ້ງການຊ່ວຍເຫຼືອຂອງທ່ານ ອາຄິມ ສະຕາຍເນີ, ຜູ້ບໍລິຫານອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ຖືກມອບແກ່ ທ່ານ ທອງຜ່ານ ສະຫວັນເພັດ, ຮອງລັດຖະມົນຕີກະຊວງການຕ່າງປະເທດແຫ່ງ ສປປ ລາວ ໂດຍທ່ານ ບາລາຊູບຣາມານຽມ ມູຣາລີ, ຮັກສາການຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ.

ທ່ານ ທອງຜ່ານ ສະຫວັນເພັດ, ຮອງລັດຖະມົນຕີກະຊວງການຕ່າງປະເທດແຫ່ງ ສປປ ລາວ, ກໍໄດ້ສະແດງຄວາມຂອບໃຈນຳອົງການສະຫະປະຊາຊາດ ເພື່ອການພັດທະນາ ເຊິ່ງທ່ານໄດ້ກ່າວວ່າ "ອົງການສະຫະປະຊາຊາດ ເພື່ອການພັດທະນາ ເປັນຄູ່ຮ່ວມມືທີ່ໃກ້ສິດຂອງ ລັດຖະບານແຫ່ງ ສປປ ລາວ. ພວກເຮົາຂໍຂອບໃຈຕໍ່ກັບການຊ່ວຍເຫຼືອຂອງທ່ານ ໃນຊ່ວງເວລາທີ່ຫຍຸ້ງຍາກນີ້ ຂອງຊາດພວກເຮົາ".

ທ່ານ ບາລາຊູບຣາມານຽມ ມູຣາລີ, ຮັກສາການຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ໄດ້ກ່າວວ່າ "ອົງການສະຫະປະຊາຊາດ ເພື່ອການພັດທະນາ ພ້ອມໃຫ້ການຊ່ວຍເຫຼືອໃນສະຖານະການສຸກເສີນ ແລະ ມີສ່ວນຮ່ວມໃນການຟື້ນຟູເບື້ອງຕົ້ນ ແລະ ການພັດທະນາໃນໄລຍະຍາວ ຕໍ່ກັບຄວາມພະຍາຍາມ ຂອງລັດຖະບານແຫ່ງ ສປປ ລາວ ໃນການຈັດການກັບໂສກນາດຕະກຳໃນຄັ້ງນີ້ ຮ່ວມກັບເຄືອຂ່າຍອົງການສະຫະປະຊາຊາດອື່ນໆ. ບຸລິມະສິດຂອງພວກເຮົາແມ່ນແຂວງອັດຕະປື ແຕ່ພວກເຮົາຕ້ອງບໍ່ລືມວ່າ ອີກ 10 ແຂວງກໍໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ ເຊິ່ງພວກເຮົາກໍຈະໃຫ້ການຊ່ວຍເຫຼືອເຊັ່ນດຽວກັນ".

ອົງການສະຫະປະຊາຊາດ ເພື່ອການພັດທະນາ ກຳລັງຈັດສັນງົບປະມານຈຳນວນ 100,000 ໂດລາສະຫະລັດ ເຊິ່ງເປັນການຊ່ວຍເຫຼືອເບື້ອງຕົ້ນ ເພື່ອສະໜອງການຊ່ວຍເຫຼືອໃນສະຖານະການສຸກເສີນ ແກ່ລັດຖະບານແຫ່ງ ສປປ ລາວ ເພື່ອຊ່ວຍໃນການປະສານງານສຳລັບການບັນເທົາທຸກ ແລະ ການກູ້ໄພ ກ່ອນເລີ່ມຕົ້ນວຽກງານ ຟື້ນຟູເບື້ອງຕົ້ນຈະເລີ່ມຂຶ້ນ.

ອີງຕາມຂໍ້ມູນຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໄພພິບັດດັ່ງກ່າວ ແມ່ນເກີດຈາກຝົນທີ່ຕົກໜັກໃນທົ່ວທຸກພາກ ຍ້ອນພະຍຸເຊີນຕິນ. ພະຍຸດັ່ງກ່າວໄດ້ສົ່ງຜົນກະທົບຕໍ່ປະຊາຊົນປະມານ 16,256 ຄົນ ໃນ 11 ແຂວງໃນທົ່ວປະເທດ.

ເຂດທີ່ນໍ້າຖ້ວມຮ້າຍແຮງທີ່ສຸດແມ່ນຢູ່ 13 ບ້ານຂອງເມືອງສະໜາມໄຊ ເຊິ່ງມີຜູ້ໄດ້ຮັບຜົນກະທົບປະມານ 6,351 ຄົນ. ໄພນໍ້າຖ້ວມ ໄດ້ທຳລາຍເຮືອນຫຼາຍພັນຫຼັງ, ເຂດກະສິກຳ ແລະ ພື້ນຖານໂຄງລ່າງ ເຊິ່ງເຮັດໃຫ້ມີຜູ້ບາດເຈັບ ແລະ ເສຍຊີວິດເປັນຈຳນວນຫຼາຍ ແລະ ບາງຈຳນວນກໍສູນຫາຍ, ບາງຈຳນວນກໍຕິດຄ້າງຢູ່ຫຼາຍບ່ອນ.

ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ເປັນອົງການນຳພາກຸ່ມວຽກງານຟື້ນຟູເບື້ອງຕົ້ນ ແລະ ພ້ອມເຮັດການປະເມີນຄວາມຕ້ອງການຫຼັງເກີດໄພພິບັດ ພ້ອມກັບນຳພາຂະບວນການວຽກງານຟື້ນຟູ ທີ່ກ່ຽວຂ້ອງກັບວຽກງານຟື້ນຟູການດຳລົງຊີວິດໃນເວລາທີ່ເໝາະສົມ.

ສອບຖາມຂໍ້ມູນ ຕິດຕໍ່:
ທ່ານ ບາລາຊູບຣາມານຽມ ມູຣາລີ
ຮັກສາການຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ
+856 20 55 505024

ທ່ານນາງ ໄອຈາມາລ ດູເຊແບວາ
ຜູ້ຮັບຜິດຊອບວຽກສື່ສານ
+856 20 59 235 160

ທ່ານ ສົມລິດ ຄູນປະເສີດ
ຜູ້ຊ່ວຍວຽກສື່ສານ
+856 20 77 711874